M0085547-26 (LO)
ມັງກອນ 2025

# ຄູ່ມືການນຳໃຊ້ ແລະ ການບຳລຸງຮັກສາ

ຂໍ້ມູນເສີມ

## ຂໍ້ມູນການປະຕິບັດຕາມກົດລະບຽບ

ລົດດຸດປະເພດຕີນສາຍເຫຼັກຂະໜາດກາງ, ລົດດຸດປະເພດຕີນສາຍເຫຼັກຂະໜາດໃຫຍ່, ລົດຕັກປະເພດຕີນສາຍເຫຼັກ, ລົດຍົກ

ສະແກນເພື່ອຊອກຫາ ແລະ ຊື້ຊິ້ນສ່ວນຂອງແທ້ Cat® ແລະ ຂໍ້ມູນບໍລິການທີ່ກ່ຽວຂ້ອງ.

i07966018

# ຂໍ້ມູນດ້ານຄວາມປອດໄພທີ່ສຳຄັນ

ອຸບັດເຫດສ່ວນໃຫຍ່ທີ່ກ່ຽວຂ້ອງກັບການນຳໃຊ້ຜະລິດຕະພັນ, ການບຳລຸງຮັກສາ ແລະ ການສ້ອມແປງແມ່ນເກີດຂື້ນຈາກຄວາມຫຼົ້ມເຫຼວໃນການປະຕິບັດຕາມກົດລະບຽບ ຫຼື ມາດຕະການປ້ອງກັນຄວາມປອດໄພພື້ນຖານ. ເຊິ່ງສ່ວນໃຫຍ່ສາມາດຫຼີກເວັ້ນອຸບັດເຫດໄດ້ໂດຍການຮັບຮູ້ເຖິງສະຖານະການທີ່ອາດເປັນອັນຕະລາຍກ່ອນທີ່ອຸບັດເຫດຈະເກີດຂຶ້ນ. ຄົນເຮົາຕ້ອງໄດ້ລະມັດລະວັງຕໍ່ອັນຕະລາຍທີ່ອາດຈະເກີດຂຶ້ນ, ຮວມທັງປັດໄຈຕ່າງໆຂອງມະນຸດທີ່ສາມາດສົ່ງຜົນຕໍ່ຄວາມປອດໄພໄດ້. ຄົນຜູ້ນີ້ຄວນໄດ້ຮັບການຝຶກອົບຮົມ, ມີທັກສະ ແລະ ເຄື່ອງມືທີ່ຈຳເປັນ ເພື່ອປະຕິບັດໜ້າທີ່ເຫຼົ່ານີ້ຢ່າງຖືກຕ້ອງ.

**ການນຳໃຊ້, ການໃສ່ນ້ຳມັນຫຼໍ່ລື່ນ, ການບຳລຸງຮັກສາ ຫຼື ການສ້ອມແປງຜະລິດຕະພັນນີ້ຢ່າງບໍ່ຖືກຕ້ອງສາມາດກໍ່ໃຫ້ເກີດອັນຕະລາຍ ແລະ ອາດສົ່ງຜົນໃຫ້ເກີດການບາດເຈັບ ຫຼື ເສຍຊີວິດໄດ້.**

**ຢ່ານຳໃຊ້ ຫຼື ດຳເນີນການໃສ່ນ້ຳມັນຫຼໍ່ລື່ນ, ບຳລຸງຮັກສາ ຫຼື ສ້ອມແປງຜະລິດຕະພັນນີ້, ຈົນກວ່າທ່ານຈະຢັ້ງຢືນໄດ້ວ່າທ່ານໄດ້ຮັບອະນຸຍາດໃຫ້ປະຕິບັດວຽກນີ້ ຮວມທັງໄດ້ອ່ານ ແລະ ເຂົ້າໃຈຂໍ້ມູນການນຳໃຊ້, ການໃສ່ນ້ຳມັນຫຼໍ່ລື່ນ, ການບຳລຸງຮັກສາ ແລະ ການສ້ອມແປງແລ້ວ.**

ການປ້ອງກັນລ່ວງໜ້າ ແລະ ຄຳເຕືອນຄວາມປອດໄພແມ່ນມີຢູ່ໃນຄູ່ມືນີ້ ແລະ ຢູ່ໃນຜະລິດຕະພັນແລ້ວ. ຖ້າບໍ່ເອົາໃຈໃສ່ປະຕິບັດຕາມຄຳເຕືອນເລື່ອງອັນຕະລາຍເຫຼົ່ານີ້, ອາດຈະເຮັດໃຫ້ທ່ານ ຫຼື ຄົນອື່ນໄດ້ຮັບບາດເຈັບຕໍ່ຮ່າງກາຍ ຫຼື ເສຍຊີວິດໄດ້.

ອັນຕະລາຍຕ່າງໆແມ່ນໄດ້ລະບຸຕາມ "ເຄື່ອງໝາຍເຕືອນຄວາມປອດໄພ" ແລະ ມີ "ຄຳສັບສັນຍານ" ຕິດມານຳ ເຊັ່ນ "ອັນຕະລາຍ", "ຄຳເຕືອນ" ຫຼື "ລະວັງ". ສະຫຼາກ "ຄຳເຕືອນ" ບອກການເອົາໃຈໃສ່ເລື່ອງຄວາມປອດໄພແມ່ນເຫັນໄດ້ຢູ່ລຸ່ມນີ້.

**⚠ ຄຳເຕືອນ**

ຄວາມໝາຍຂອງເຄື່ອງໝາຍເຕືອນຄວາມປອດໄພແມ່ນມີດັ່ງນີ້:

**ເອົາໃຈໃສ່! ລະວັງ! ຄວາມປອດໄພຂອງທ່ານມີສ່ວນກ່ຽວຂ້ອງ.**

ຂໍ້ຄວາມທີ່ປະກົດຂຶ້ນຢູ່ກ້ອງຄຳເຕືອນອະທິບາຍເຖິງອັນຕະລາຍ ແລະ ສາມາດຂຽນເປັນຕົວໜັງສື ຫຼື ສະແດງເປັນຮູບເຕືອນໄດ້.

ລາຍການການເຮັດວຽກໂດຍຫຍໍ້ທີ່ອາດເຮັດໃຫ້ຜະລິດຕະພັນເກີດເປ່ເພ ໄດ້ລະບຸໄວ້ໃນປ້າຍກຳກັບ "ໝາຍເຫດ"  ຢູ່ໃນຜະລິດຕະພັນ ແລະ ເອກະສານນີ້

**Caterpillar ບໍ່ສາມາດຄາດການໄດ້ຢູ່ໃນທຸກສະພາບການທີ່ອາດຈະມີສ່ວນພົວພັນກັບອັນຕະລາຍທີ່ອາດຈະເກີດຂຶ້ນ. ດັ່ງນັ້ນ, ຄຳເຕືອນຢູ່ໃນເອກະສານເຜີຍແຜ່ນີ້ ແລະ ຢູ່ໃນຜະລິດຕະພັນຈຶ່ງບໍ່ທັນໄດ້ຄົບຖ້ວນທັງໝົດ. ທ່ານຕ້ອງບໍ່ນຳໃຊ້ຜະລິດຕະພັນນີ້ໄປໃນທາງອື່ນທີ່ແຕກຕ່າງໄປຈາກຄູ່ມືນີ້ໄດ້ພິຈາລະນາໄວ້ ໂດຍບໍ່ໄດ້ມີການເຮັດໃຫ້ຕົວທ່ານເອງແນ່ໃຈກ່ອນວ່າ ທ່ານໄດ້ພິຈາລະນາເບິ່ງກົດກຳນົດເລື່ອງຄວາມປອດໄພທຸກຢ່າງ ແລະ ຄຳເຕືອນລ່ວງໜ້າຕ່າງໆທີ່ໄດ້ນຳໃຊ້ກັບການໃຊ້ງານຂອງຜະລິດຕະພັນຢູ່ໃນບ່ອນນຳໃຊ້, ລວມທັງກົດກຳນົດສະເພາະໃນບ່ອນໃຊ້ງານ ແລະ ຄຳເຕືອນລ່ວງໜ້ານຳໃຊ້ຢູ່ບ່ອນເຮັດວຽກ. ຖ້າເຄື່ອງມື, ຂັ້ນຕອນດຳເນີນງານ, ວິທີການເຮັດວຽກ ຫຼື ເຕັກນິກການໃຊ້ງານ Caterpillar ບໍ່ໄດ້ແນະນຳໃຫ້ເປັນການສະເພາະນັ້ນຖືກນຳມາໃຊ້, ທ່ານຕ້ອງໃຫ້ແນ່ໃຈ້ກັບຕົວທ່ານເອງວ່າ ມັນປອດໄພສຳລັບທ່ານ ແລະ ຕໍ່ກັບຄົນອື່ນແລ້ວ. ທ່ານຄວນໃຫ້ແນ່ໃຈວ່າ ທ່ານໄດ້ຮັບອະນຸຍາດໃຫ້ເຮັດວຽກນີ້, ແລະ ຜະລິດຕະພັນຈະບໍ່ໄດ້ຮັບຄວາມເສຍຫາຍ ຫຼື ບໍ່ມີຄວາມປອດໄພຈາກການຂັ້ນຕອນການໃຊ້ງານ, ການໃສ່ນ້ຳມັນຫຼໍ່ລື່ນ, ການບຳລຸງຮັກສາ ຫຼື ການສ້ອມແປງ ທີ່ທ່ານຕັ້ງໃຈນຳໃຊ້.**

ຂໍ້ມູນ, ລັກສະນະສະເພາະ, ແລະ ຄຳອະທິບາຍປະກອບພາບຢູ່ໃນເອກະສານເຜີຍແຜ່ນີ້ແມ່ນຢູ່ບົນພື້ນຖານຂໍ້ມູນທີ່ມີຢູ່ໃນເວລາທີ່ໄດ້ຂຽນເອກະສານເຜີຍແຜ່ຂຶ້ນມາ. ລັກສະນະສະເພາະ, ແຮງບິດ, ຄວາມດັນ, ການວັດແທກ, ການປັບປ່ຽນ, ການອະທິບາຍປະກອບພາບ, ແລະ ລາຍການອື່ນໆແມ່ນສາມາດປ່ຽນໄດ້ທຸກເວລາ. ການປ່ຽນແປງເຫຼົ່ານີ້ສາມາດມີຜົນກະທົບຕໍ່ການບໍລິການທີ່ໃຫ້ມາກັບຜະລິດຕະພັນ. ໃຫ້ເອົາຂໍ້ມູນຄົບຖ້ວນ ແລະ ຫຼ້າສຸດມາສຶກສາກ່ອນທີ່ທ່ານຈະເລີ່ມຕົ້ນເຮັດວຽກໃດໜຶ່ງ. ຜູ້ຂາຍ Cat ມີຂໍ້ມູນຫຼ້າສຸດຢູ່.

---

ແຈ້ງການ

**ເມື່ອຈຳເປັນຕ້ອງໄດ້ປ່ຽນຖ່າຍອາໄຫຼ່ສຳລັບຜະລິດຕະພັນນີ້ Caterpillar ຂໍແນະນຳໃຫ້ໃຊ້ອາໄຫຼ່ປ່ຽນຖ່າຍຂອງແທ້ຂອງ Caterpillar®.**

**ອາໄຫຼ່ອື່ນໆອາດຈະບໍ່ເປັນໄປຕາມຂໍ້ກຳນົດສະເພາະບາງປະການຂອງອຸປະກອນແບບດັ້ງເດີມ.**

**ເມື່ອມີການຕິດຕັ້ງຊິ້ນສ່ວນອາໄຫຼ່, ເຈົ້າຂອງ/ຜູ້ໃຊ້ເຄື່ອງຈັກຄວນສອບສອບໃຫ້ດີເພື່ອຮັບປະກັນວ່າ ເຄື່ອງຈັກຍັງຄົງເປັນໄປຕາມຂໍ້ກຳນົດທີ່ກ່ຽວຂ້ອງທັງໝົດ.**

---

**ຢູ່ໃນສະຫະລັດ, ການບຳລຸງຮັກສາ, ການປ່ຽນຖ່າຍ, ຫຼື ການສ້ອມແປງອຸປະກອນ ແລະ ລະບົບຄວບຄຸມການປ່ອຍອາຍເສຍແມ່ນອາດຈະໃຫ້ຮ້ານສ້ອມແປງ ຫຼື ບຸກຄົນໃດໜຶ່ງເຮັດຕາມທີ່ຜູ້ເປັນເຈົ້າຂອງເລືອກໄດ້.**

# ສາລະບານ

ຄຳນຳ....4

## ພາກການໃຊ້ງານ

ການໃຊ້ງານ....5

## ຂໍ້ມູນການປະຕິບັດຕາມກົດລະບຽບ

ອົງປະກອບດ້ານຄວາມຖີ່ຂອງວິທະຍຸ....6

## ພາກສ່ວນເອກະສານຊ້ອນທ້າຍ

ດັດຊະນີ....108